**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 22 ສິງຫາ 2010 ( 08-22-2010 )**

---

**<u>ເວົ້າເຖິງຄວາມບາບສ່ວນຕົວ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (2 ຊາມູເອນ 11:2-5, 14-15; 12:7ກ,10-14; ເພງສັຣເສີນ 51:1-4)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>**

ບົດຮຽນນີ້ເວົ້າເຣື່ອງພຣະເຈົ້າຖືວ່າພວກເຮົາມີຄວາມຮັບຜິດຊອບຕໍ່ຄວາມຜິດບາບຂອງພວກເຮົາ ແລະບອກເຖິງວິທີຄວນຈະເຮັດຢ່າງໃດຕໍ່ຄວາມຜິດບາບ ແລະຄວາມພາດພັ້ງສ່ວນຕົວ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:</u>**

ເຖິງແມ່ນຄຣິສະຕຽນດີກໍຍັງຕົກໄປໃນການທົດລອງ. ບໍ່ແມ່ນຄຳເວົ້າວ່າຖ້າເຮົາເປັນຕົກໄປ ແຕ່ແມ່ນເມື່ອໃດເຮົາຈະຕົກໄປ. ໃນເມື່ອເຮົາໄດ້ຕົກໄປພວກມັກເຊື່ອງມັນໄວ້ຫລືຖິ້ມໂທດໃສ່ຄົນອື່ນເວລາຖືກເຈັບໄດ້. ທາງດີທີ່ສຸດຄືໃຫ້ຕອບສນອງໃນເມື່ອຕົກໃນຄວາມບາບຄື ສາລະພາບ ແລະຖິ້ມໃຈເກົ່າແລະເອົາໃຈໃໝ່.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ບົດຮຽນນີ້ຈະຊ່ອຍໜູນໃຈທ່ານໃຫ້ຮູ້ເຖິງຄວາມຍິນດີຂອງພຣະເຈົ້າທີ່ຈະໃຫ້ອະພັຍຄວາມຜິດບາບແລະສອນໃຫ້ທ່ານຮ້ອງຂໍຕໍ່ພຣະອົງເຖິງຄວາມຜິດສ່ວນຕົວໃນຊີວິດຂອທ່ານ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ເປັນຫຍັງພວກເຮົາຈຶ່ງຈຳເປັນຕ້ອງຮັບຜິດຊອບຕໍ່ຄວາມຜິດບາບຂອງພວກເຮົາ ໃຫ້ສຳເຣັດຕາມຄຳສັ່ງຂອງພຣະເຈົ້າ?
- ໃຫ້ຜູ້ນຶ່ງເວົ້າເຖິງເຣື່ອງ ລູກທີ່ບໍ່ຍອມທຳຕາມ ແລະໄດ້ພຍາຍາມທີ່ຈະໃຫ້ທຳຕາມແລ້ວ, ແຕ່ກໍຍິ່ງທຳຜິດເພີ້ມຂຶ້ນ. ແລ້ວສົນທະນາກັນວ່າ ເປັນຫຍັງຈຶ່ງໃຊ້ການບໍ່ໄດ້.
- ເປັນດ້ວຍເຫດໃດ ພວກເຮົາຈຶ່ງພຍາຍາມປົກປິດໃນການກະທຳຜິດຂອງພວກເຮົາ ຫລືຖິ້ມໂທດ ຫລື

ກ່າວວ່າຄົນອື່ນໃນເມື່ອພວກເຮົາຖືກຈັບໄດ້? (ເປັນນຳຜູ້ນັ້ນ…ທັ້ນແຫລະ..)

1. **<u>ຮູ້ເຖິງການທົດລອງວ່າມັນນຳໄປສູ່ຄວາມຜິດບາບ:</u>** (2 ຊາມູເອນ 12:2-5, 14-15)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ 2 ຊາມູເອນ 12:2-5,14-15
- ສລຸບ 2 ຊາມູເອລ 11:6-13 ໂດຍຫຍໍ້.
- ຫລາຍຄັ້ງຄວາມເພິ່ງພໍໃຈໃນສັງຄົມວັທນະທັມຂອງພວກເຮົາ ກໍອາຈຫລອກລວງພວກເຮົາໃຫ້ກະທຳຄວາມຜິດບາບໄດ້.
- ພວກເຮົາຈະເຮັດແນວໃດເພື່ອລົດຜ່ອນການເພິ່ງພໍໃຈ ແລະຮູ້ຈັກໄຈ້ແຍກທາງສັງຄົມວັທນະທັມນີ້ໄດ້?
- ອ່ານພຣະທັມ 1 ໂກຣິນໂທ 10:13. ແລ້ວຖາມວ່າ: ພຣະທັມຕອນນີ້ໄດ້ມີສ່ວນກ່ຽວພັນກັບບັນຫາຂອງດາວິດຢ່າງໃດ?
- ເຖິງແມ່ນວ່າຄຣິສຕຽນຫລາຍຄົນໄດ້ຮັບຄຳສັນຍາໃຫ້ລອດພົ້ນແລ້ວກໍຕາມ ເຂົາເຈົ້າຍັງມີຄວາມສາມາດຕົກໄປສູ່ການກະທຳຜິດບາບໄດ້. ສິນທະນາເຖິງຜູ້ນຳໃນໂບດ ຫລືຄຣິສຕຽນທົ່ວໆ ໄປຕາມສາຍຕາສາທາຣະນະຊົນ ຜູ້ທີ່ຕົກຢູ່ໃນການຄວບຄຸມບາງສິ່ງບາງຢ່າງ ຫລືກຳລັງຖືກການທົດລອງຢູ່.
- ແນ່ນອນ ຫລາຍກວ່ານັ້ນ ໃນຄວາມຮູ້ສຶກໃຈຮ້າຍ ໂມໂຫ ຫລືຜິດຫວັງຢ່າງແຮງຕໍ່ ອ້າຍເອື້ອຍນ້ອງ ຜູ້ທີ່ຕົກຢູ່ໃນການຫລອກລວງ, ພວກເຮົາກໍເຊັ່ນດຽວກັນຈະມີຄວາມຮູ້ສຶກໂສກເສົ້າ ເສັຽໃຈເໝືອນກັບດາວິດທີ່ໄດ້ຍິນເຣື່ອງນາທານບອກ.
- ພຣະຄຣິສໄດ້ວາຍພຣະຊົນເທິງໄມ້ກາງແຂນ ເພື່ອໄຖ່ໂທດຄວາມບາບນັ້ນແລ້ວ (ອ່ານພຣະທັມ ໂຣມ 3:22-24)

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (2 ຊາມູເອນ 11:2-5, 14-15)

1. ດາວິດຄິດວ່າ ການທີ່ລາວໄດ້ເຮັດບາບກັບບັດເຊບານັ້ນຈະປິດບັງເປັນຄວາມລັບບໍ່?
2. ໃນພວກເຮົາມີໃຜແດ່ທີ່ບໍ່ເຄີຍໄດ້ປົກປິດຄວາມຜິດບາບຂອງຕົນນໄວ້?
3. ໃນເພງສັຣເສີນ 41:4, ເພງສັຣເສີນຂອງດາວິດ, ໄດ້ໜູນໃຈພວກເຮົາໃຫ້ຈົດຈຳໄວ້ສເມີວ່າ ພຣະເຈົ້າຊົງຮູ້ຈັກຄວາມຜິດບາບຂອງພວກເຮົາແນວໃດ?
4. ພວກເຮົາໄດ້ພາກັນຊຸກເຊື່ອງຄວາມຜິດບາບໂດຍວິທີທາງໃດ?

2. **<u>ໃຫ້ຮູ້ວ່າຄວາມບາບນັ້ນປະໄວ້ບໍ່ໄດ້:</u>** (2 ຊາມູເອນ 12:7ກ, 10-12)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ 2 ຊາມູເອນ 12:7ກ, 10-12
- ສລຸບເຫດການທີ່ເກີດຂຶ້ນລະຫວ່າງ 2 ຊາມູເອນ 11:15, ພຣະທັມຕອນນີ້, ແລະຄຳອຸປມາຂອງນາທານ. ໄດ້ບົ່ງບອກຄວາມຈິງທີ່ທຸກຢ່າງທີ່ລາວເວົ້າອອກມາ, ດາວິດໄດ້ພຍາຍາມປົກປິດຄວາມຜິດບາບຂອງລາວ, ນາທານ ໄດ້ປຽບທຽບໃຫ້ດາວິດຮູ້ ໂດຍການໃຊ້ຄຳຕັດຂອງພຣະເຈົ້າໃຫ້ດາວິດຟັງ.
- ພວກເຮົາຕ້ອງການຜູ້ໃດຜູ້ນຶ່ງເໝືອນນາທານໃນຊີວິດຂອງພວກເຮົາ, ເປັນຜູ້ມີຄວາມເປັນຫ່ວງເປັນໄຍ, ເປັນເວົ້າປອບໃຈຢ່າງສັດຊື່ຕໍ່ພວກເຮົາ.
- ພຣະເຈົ້າບໍ່ໄດ້ປະລະຄວາມຜິດບາບຂອງພວກເຮົາ. ພຣະອົງຈະເປີດເຜີຍໃນການກະທຳຂອງ

ພວກເຮົາ.

- ພຣະທັມນີ້ ໄດ້ຊີ້ໃຫ້ພວກຮູ້ ພວກເຮົາຍັງຈະປະເຊີນໜ້າກັບຄວາມຜິດບາບຂອງພວກເຮົາແນວໃດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** 2 ຊາມູເອນ 12:7ກ, 10-12

1. ດາວິດໄດ້ມີຄວາມຊຸ່ນເຄືອງໃຈຢ່າງໃດຕໍ່ຄຳອຸປມາ ປຽບທຽບຂອງນາທານ? ຖ້າໃນຊີວິດຂອງພວກເຮົາ ຖືກກັບຄຳອຸປມາ ປຽບທຽບຂອງນາທານ ແລ້ວພວກເຮົາຈະຕອບສນອງແນວໃດ? ພວກເຮົາຈະຍິນດີຮັບບໍ່?
2. ການຕອບສນອງຊຶ່ງເປັນການຜິດໃນຊີວິດຂອງພວກເຮົາເອງນັ້ນແມ່ນທາງໃດ? ທາງໃດເປັນທາງທີ່ຖືກຕ້ອງ, ທາງຂອງພວກເຮົາເອງຫລືທາງຂອງພຣະເຈົ້າ?
3. ແມ່ນຫຍັງທີ່ເປັນຜົນຂອງການກະທຳຜິດບາບຂອງດາວິດທີ່ຕາມມາ? ທຸກໆການກະທຳບາບມີຜົນຕາມມາໝົດບໍ່?
4. ຜົນກັບມານັ້ນ ພວກເຮົາຈະລົບລ້າງມັນຫລືຈະປະຕິເສດມັນ? ໃນເມື່ອຄວາມບາບຂອງພວກເຮົາຖືເປີດເຜີຍແລ້ວ ພວກເຮົາຈະສາຣະພາບ ຫລືຈະປະຕິເສດດີ?

3 . **<u>ຍິນດີເພີ້ນເພາະຄວາມຜິດບາບໄດ້ຖືກອະພັຍແລ້ວ:</u>** (2 ຊາມູເອນ 12:13-14; ເພງສັຣເສີນ 51:1-4)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ຊາມູເອນ 12:13-14; ເພງສັຣເສີນ 51:1-4
- ອີງຕາມພຣະທັມເຫລົ່ານີ້ແລ້ວ, ແມ່ນຜູ້ໃດທີ່ມີຄວາມສົນໃຈໃນຄວາມບາບຂອງດາວິດທີ່ໄດ້ທຳ? (ຄຳຕອບພ້ອມທັງ ບັດຊີບາ, ອຸຣີຢາ, ລູກໆ ຂອງບັດຊີບາທີ່ເຮັດເປັນຕາໜ່າຍ, ດາວິດ, ນາທານ, ແລະອື່ນໆ)
- ເປັນເພາະເຫດໃດຄວາມບາບຂອງພວກເຮົາທີ່ມີຢູ່ ໄດ້ຕໍ່ສູ້ກັບພຣະເຈົ້າຢູ່?
- ເປັນຫຍັງພວກເຮົາຈຶ່ງຍັງມີຄວາມລັງເລໃຈທີ່ຈະຍອມຮັບ ແລະຕອບສນອງຕໍ່ຄວາມຜິດບາບຂອງພວກເຮົາຢູ່? ເຮັດແນວໃດພວກເຮົາຈຶ່ງຈະເປັນຄົນຜູ້ທີ່ໄດ້ໃຫ້ອະພັຍໄດ້?
- ເປັນຫຍັງພວກເຮົາຍັງມີຄວາມທຸກທໍຣະມານຢູ່?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** 2 ຊາມູເອນ 12:13-14; ເພງສັຣເສີນ 51:1-4

1. ຄວາມບາບທີ່ດາວິດກະທຳໄດ້ປະກົດຜົນຢູ່ໃນສມັຍຂອງລາວແນວໃດ ແລະສມັຍຕໍ່ໆ ຈົນເຖິງຊີວິດປະຈຸບັນຄົນໃນສມັຍນີ້ເດ?
2. ຜົນຕໍ່ສາຍສັມພັນກັບພຣະເຈົ້າເດ ເປັນແນວໃດ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ການຫລອກລວງໄດ້ເລີ້ມເຂົ້າມາຢ່າງແນບນຽນ ແລະກໍຈະເຣີນເຕີບໂຕຂຶ້ນ ແລະກໍມີພລັງຫລາຍ ຖ້າພວກເຮົາຍອມຮັບມັນ.
- ທຸກໆ ຄົນສາມາຕົກໄປສູ່ຄວາມຜິດບາບຢ່າງເລິກເຊິ່ງໄດ້ ໃນເມື່ອເຂົາເຈົ້າຫາກບໍ່ຮູ້ຈັກການຫລອກລວງ.
- ພວກເຮົາສາມາດຮັບການໃຫ້ອະພັຍໄດ້ ໂດຍຜ່ານທາງການທຳຕາມພຣະປະສົງຂອງພຣະເຈົ້າ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**